ທຄຕລ ເຂົ້າຮ່ວມພິທີສະຫຼຸບຜົນງານການເຄື່ອນໄຫວ ວຽກງານຕະຫຼາດທຶນລາວ ຄົບຮອບ 15 ປີ 2010 – 2025







ຂ່າວໂດຍ: ຂະແໜງພົວພັນນັກລົງທຶນ & ຮ່ວມມືສາກົນ

https://www.bcel.com.la//

bcelhqv@bcel.com.la

ໃນຕອນບ່າຍ ວັນທີ 11 ພະຈິກ 2025 ທີ່ຫ້ອງປະຊຸມໃຫຍ່ຊັ້ນ 8 ຕະຫຼາດຫຼັກຊັບລາວ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ເຂົ້າຮ່ວມ ທິສະຫຼຸບຜົນງານຕະຫຼາດທຶນລາວ ຄົບຮອບ 15 ປີ (2010–2025) ພາຍໃຕ້ການເປັນປະທານຂອງ **ທ່ານ ສະເຫຼີມໄຊ ກົມມະສິດ** ຮອງນາຍົກລັດຖະມົນຕີ, ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ), ພ້ອມດ້ວຍບັນດາອະດີດພະນັກງານ ແລະ ບັນດາພະນັກງານທີ່ປະກອບສ່ວນໃນວຽກງານສ້າງຕັ້ງຕະຫຼາດທຶນ, ບັນດາຜູ້ມີສ່ວນຮ່ວມ ແລະ ອົງການຈັດຕັ້ງສາກົນກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ



ໃນພິທີ, **ທ່ານ ນ. ແພງສີ ແພງເມືອງ** ຫົວໜ້າ ສຄຄຊ ໄດ້ລາຍງານຜົນງານການເຄື່ອນໄຫວຂອງວຽກງານຕະຫຼາດທຶນຕະຫຼອດໄລຍະເວລາ 15 ປີ ຊຶ່ງສະແດງໃຫ້ເຫັນຜົນສຳເລັດທີ່ຍາດມາໄດ້ຫຼາຍດ້ານ ແລະ ເປັນປັດໄຈສົ່ງເສີມໃຫ້ຕະຫຼາດທຶນລາວມີການເຕີບໃຫຍ່ຂະຫຍາຍຕົວຢ່າງພາວະວິໄສໃນແຕ່ລະໄລຍະ. ຫຼັງຈາກນັ້ນ, **ທ່ານ ສຽວສະຫວາດ ທິລະກຸນ** ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ ກໍ່ໄດ້ລາຍງານແຜນປະຕິບັດວຽກງານໃນ 5 ປີຕໍ່ໜ້າ ໃນຖານະທີ່ເປັນອົງປະກອບສຳຄັນໃນຕະຫຼາດຂັ້ນສອງ.

ນອກຈາກນີ້, **ທ່ານ ນາງ ສາຍສະໝອນ ຈັນທະຈັກ** ຜູ້ອຳນວຍການ ທຄຕລ ຍັງໄດ້ຮັບໃບຍ້ອງຍໍໃນນາມບຸກຄົນ ແລະ ທຄຕລ ໄດ້ຮັບໃບຍ້ອງຍໍໃນນາມອົງກອນ ຈາກທ່ານປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ ທີ່ໄດ້ມີຜົນງານໃນການປະກອບສ່ວນເຄື່ອນໄຫວວຽກງານຕະຫຼາດທຶນລາວ ໃນໄລຍະ 15 ປີ (2010–2025).

